ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

0290

ເລກທີ............./ຫອຄ.ນຄຕ.ສຝ

ນະຄອນຫລວງວຽງຈັນ, ວັນທີ 01 FEB 2016

**<u>ແຈ້ງການ</u>**

ຮຽນ: - ທ່ານຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

- ທ່ານຫົວໜ້າກົມພາສີ, ກະຊວງການເງິນ
- ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ
- ທ່ານເລຂາທິການສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ເລື່ອງ: ການຈັດຕັ້ງປະຕິບັດບຸລິມະສິດອັດຕາພາສີ ລາວ-ຫວຽດນາມ ນັບແຕ່ ປີ 2016 ເປັນຕົ້ນໄປ ຕາມສັນຍາການຄ້າສອງຝ່າຍ ລາວ-ຫວຽດນາມ.

- ອີງຕາມເນື້ອໃນຂອງສັນຍາການຄ້າ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ, ສະບັບລົງວັນທີ 03 ມີນາ 2015.
- ອີງຕາມໜັງສືຈາກກະຊວງການຕ່າງປະເທດ ສະບັບເລກທີ 170/AE.DT.1, ລົງວັນທີ 7 ສິງຫາ 2015.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ການຈັດຕັ້ງປະຕິບັດບຸລິມະສິດອັດຕາພາສີ ລາວ-ຫວຽດນາມ ນັບແຕ່ ປີ 2016 ເປັນຕົ້ນໄປ ແມ່ນໃຫ້ຈັດຕັ້ງປະຕິບັດຕາມເນື້ອໃນ ຂອງສັນຍາການຄ້າ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ທີ່ລົງນາມຮ່ວມກັນໃນວັນທີ 03 ມີນາ 2015 ແລະ ມີຜົນສັກສິດນັບແຕ່ວັນທີ 03 ຕຸລາ 2015 ເປັນຕົ້ນໄປ, ຊຶ່ງໃນສັນຍາດັ່ງກ່າວ ສອງຝ່າຍໄດ້ໃຫ້ບຸລິມະສິດອັດຕາພາສີ ນຳເຂົ້າ-ສົ່ງອອກ ຊຶ່ງກັນ ແລະ ກັນ ລາຍລະອຽດ ດັ່ງນີ້:

1. ລາຍການສິນຄ້າທີ່ນອນໃນບັນຊີ 3 ແລະ ລາຍການສິນຄ້າທີ່ບໍ່ນອນໃນບັນຊີ 1a, 1b, 2a, 2b ຂອງສັນຍາ ແມ່ນຈະໄດ້ຮັບອັດຕາພາສີ 0%.
2. ລາຍການສິນຄ້າທີ່ນອນໃນບັນຊີ 1a ຂອງສັນຍາ ແມ່ນຈະໄດ້ຮັບການຫຼຸດອັດຕາພາສີ 50% ຈາກອັດຕາພາສີຂາເຂົ້າ ຂອງ ສປປ ລາວ ທີ່ໃຫ້ພາຍໃຕ້ສັນຍາການຄ້າວ່າດ້ວຍຜະລິດຕະພັນໃນຂອບອາຊຽນ (ATIGA); ແລະ ບັນຊີ 2a ຂອງສັນຍາ ແມ່ນບໍ່ໄດ້ຮັບການຫຼຸດອັດຕາພາສີຂາເຂົ້າ ຂອງ ສປປ ລາວ. ບັນດາລາຍການສິນຄ້າ ແມ່ນອີງຕາມສາລະບານອັດຕາພາສີເອກະພາບອາຊຽນ ປີ 2012 (AHTN 2012) ຂອງ ສປປ ລາວ.

3. ລາຍການສິນຄ້າທີ່ມອບໃນບັນຊີ 1b ຂອງສັນຍາ ແມ່ນຈະໄດ້ຮັບການຫຼຸດອັດຕາພາສີ 50% ຈາກອັດຕາພາສີຂາເຂົ້າ ຂອງ ສສ ຫວຽດນາມ ທີ່ໃຫ້ພາຍໃຕ້ສັນຍາການຄ້າວ່າດ້ວຍຜະລິດຕະພັນໃນຂອບອາຊຽນ (ATIGA); ແລະ ບັນຊີ 2b ຂອງສັນຍາ ແມ່ນບໍ່ໄດ້ຮັບການຫຼຸດອັດຕາພາສີຂາເຂົ້າ ຂອງ ສສ ຫວຽດນາມ. ບັນດາລາຍການສິນຄ້າ ແມ່ນອີງຕາມສາລະບານອັດຕາພາສີເອກະພາບອາຊຽນ ປີ 2012 (AHTN 2012) ຂອງ ສສ ຫວຽດນາມ.
4. ສິນຄ້າຈະໄດ້ຮັບບຸລິມະສິດອັດຕາພາສີ ລາວ-ຫວຽດນາມ ຕ້ອງນຳໃຊ້ ແລະ ສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າ ຕາມຂໍ້ຕົກລົງ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສສ ຫວຽດນາມ ວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້າ ນຳໃຊ້ຕໍ່ສິນຄ້າໄດ້ບຸລິມະສິດ ອັດຕາພາສີ ນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ, ສະບັບລົງວັນທີ 01 ຕຸລາ 2009 (Form S).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດຢ່າງຖືກຕ້ອງດ້ວຍ.

ຮັກສາການ ຫົວໜ້າຫ້ອງການ,

ຫ້ອງການ

ພຸດທະວັນ ນັນທະວົງ

ຕິດຕໍ່ພົວພັນ
ສີສະໝຸດ ແກ້ວໄຊຍາ
ໂທ 021 415931, 02056140888
ແຟັກ: 021 450066